ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

======ooo======

ສຳນັກງານນາຍົກລັດຖະມົນຕີ

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເລກທີ 0005 /ສນຍ.ອຄດຊ

ນະຄອນຫລວງວຽງຈັນ, ວັນທີ 01/02/2010

## ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດວຽກງານເກັບລາຍຮັບຈາກທີ່ດິນ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 67/ນຍ, ລົງວັນທີ 18 ພຶດສະພາ 2004 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ;
- ອີງຕາມມາດຕາ 38 ແລະ 55 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006 ;
- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 215/ຄປຈ, ລົງວັນທີ 29 ທັນວາ 2009 ກ່ຽວກັບການຕີຄວາມໝາຍຂອງຄຳວ່າຄ່າທຳນຽມ, ຄ່າທຳນຽມ ນຳໃຊ້ທີ່ດິນ ແລະ ຄ່າພາສີທີ່ດິນ ;
- ອີງຕາມມາດຕາ 14 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 88/ນຍ, ລົງວັນທີ 3 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ;
- ອີງຕາມມາດຕາ 42 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009 ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ ;
- ອີງຕາມບົດບັນທຶກການມອບ - ຮັບກ່ຽວກັບການເກັບລາຍຮັບຈາກທີ່ດິນ ລະຫວ່າງ ລັດຖະມົນຕີວ່າການ ກະຊວງການເງິນ ກັບລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ສະບັບລົງວັນທີ 19 ພະຈິກ 2008.

ເພື່ອຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຄວາມເປັນຈິງຮັບປະກັນການເກັບລາຍຮັບຈາກທີ່ດິນໄດ້ຢ່າງມີປະສິດທິພາບໂດຍສອດຄ່ອງກັບລະບຽບກົດໝາຍ :

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ອອກຄຳແນະນຳ :

## 1. ການຈັດຕັ້ງເກັບລາຍຮັບຈາກທີ່ດິນ.

ການຈັດຕັ້ງເກັບລາຍຮັບຈາກທີ່ດິນຕ້ອງໄດ້ຈັດຕັ້ງເປັນລະບົບແຕ່ຂັ້ນສູນກາງ ຮອດຂັ້ນທ້ອງຖິ່ນກ່ຽວກັບການຄຸ້ມຄອງ - ບໍລິຫານ ແລະ ການຈັດຕັ້ງປະຕິບັດຕົວຈິງຢູ່ຮາກຖານ ຊຶ່ງໃນນັ້ນ :

1.1 ຢູ່ຂັ້ນສູນກາງ ອົງການຄຸ້ມຄອງທີ່ດິນແຫ່ງຊາດ ໃຫ້ຈັດຕັ້ງເປັນໜ່ວຍງານຄຸ້ມຄອງລາຍຮັບຈາກທີ່ດິນໂດຍໃຫ້ຂຶ້ນກັບພະແນກແຜນການ - ການເງິນ ຊຶ່ງປະກອບດ້ວຍພະນັກງານ ສາມຫາສີ່ ທ່ານ ໃນນັ້ນມີຫົວໜ້າໜ່ວຍງານ ໜຶ່ງ ທ່ານ, ຮອງຫົວໜ້າໜ່ວຍງານ ໜຶ່ງ ທ່ານ ແລະ ວິຊາການຈຳນວນໜຶ່ງທີ່ມີຄວາມຮູ້ວິຊາສະເພາະກ່ຽວກັບການເງິນ, ການບັນຊີ ແລະ ຄອມພີວເຕີ ລະດັບຊັ້ນປະລິນຍາຕີຂຶ້ນເມືອ ຕາມການແຕ່ງຕັ້ງຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ໂດຍການສະເໜີຂອງຫົວໜ້າຫ້ອງການເພື່ອຮັບຜິດຊອບຕິດຕາມກວດກາ ແລະ ເກັບລາຍຮັບຈາກທີ່ດິນທົ່ວປະເທດ ເຊັ່ນ : ເກັບຄ່າທຳນຽມນຳໃຊ້ທີ່ດິນ, ຄ່າເຊົ່າ, ຄ່າສຳປະທານ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການຫັນປ່ຽນປະເພດທີ່ດິນ, ຄ່າສຳຫຼວດວັດແທກ, ແຕ້ມແຜນທີ່(ທີ່ບໍ່ແມ່ນເພື່ອອອກໃບຕາດິນ)ຂອງອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຫຼວງວຽງຈັນ. ສ່ວນການເກັບຄ່າທຳນຽມ,ຄ່າຈົດທະບຽນທີ່ດິນ,ຄ່າບໍລິການວິຊາການ ແລະ ລາຍຮັບອື່ນໆກ່ຽວກັບທີ່ດິນເຊັ່ນ : ຄ່າສຳຫຼວດວັດແທກ, ແຕ້ມແຜນທີ່ (ເພື່ອອອກໃບຕາດິນ), ຄ່າຂາຍແບບຟອມ ແມ່ນມອບໃຫ້ກົມທີ່ດິນ ທີ່ໄດ້ຮັບຜິດຊອບໃນໄລຍະຜ່ານມາເປັນຜູ້ຮັບຜິດຊອບຊີ້ນຳ ແລະ ຕິດຕາມກວດກາການເກັບລາຍຮັບດັ່ງກ່າວກ່ອນຈົນກ່ວາຈະມີການປັບປຸງການຈັດຕັ້ງ ແລະ ປ່ຽນແປງ.

1.2 ສຳລັບຢູ່ທ້ອງຖິ່ນ ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນ ແມ່ນໃຫ້ຕັ້ງເປັນໜ່ວຍງານຄຸ້ມຄອງລາຍຮັບຈາກທີ່ດິນໂດຍໃຫ້ຂຶ້ນກັບຫ້ອງການບໍລິຫານ - ຈັດຕັ້ງ ແລະ ພະນັກງານ ຊຶ່ງປະກອບດ້ວຍພະນັກງານ ສີ່ ຫາ ຫ້າ ທ່ານໃນນັ້ນມີຫົວໜ້າໜ່ວຍງານ ໜຶ່ງ ທ່ານ, ຮອງຫົວໜ້າໜ່ວຍງານ ໜຶ່ງ ທ່ານ ແລະ ວິຊາການຈຳນວນໜຶ່ງ ທີ່ມີຄວາມຮູ້ວິຊາສະເພາະກ່ຽວກັບການເງິນ, ການບັນຊີ ແລະ ຄອມພີວເຕີລະດັບຊັ້ນສູງຂຶ້ນເມືອ ຕາມການແຕ່ງຕັ້ງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໂດຍການສະເໜີຂອງຫົວໜ້າອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນເພື່ອຮັບຜິດຊອບຕິດຕາມກວດກາ ແລະເກັບລາຍຮັບຈາກທີ່ດິນເຊັ່ນ : ເກັບຄ່າທຳນຽມນຳໃຊ້ທີ່ດິນ, ຄ່າເຊົ່າ, ຄ່າສຳປະທານ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການຫັນປ່ຽນປະເພດທີ່ດິນ, ຄ່າສຳຫຼວດວັດແທກ, ແຕ້ມແຜນທີ່ (ທີ່ບໍ່ແມ່ນເພື່ອອອກໃບຕາດິນ) ຂອງອົງການຄຸ້ມຄອງທີ່ດິນ ປະຈຳເມືອງ ເທດສະບານ. ສ່ວນການເກັບຄ່າທຳນຽມ, ຄ່າຈົດທະບຽນທີ່ດິນ, ຄ່າບໍລິການວິຊາການ ແລະ ລາຍຮັບອື່ນໆກ່ຽວກັບທີ່ດິນ ເຊັ່ນ : ຄ່າສຳຫຼວດວັດແທກ, ແຕ້ມແຜນທີ່ (ເພື່ອອອກໃບຕາດິນ), ຄ່າຂາຍ

ແບບຟອມ ແມ່ນມອບໃຫ້ຫ້ອງການທີ່ດິນທີ່ໄດ້ຮັບຜິດຊອບໃນການເກັບໃນໄລຍະຜ່ານມາເປັນຜູ້ຮັບຜິດຊອບເກັບລາຍຮັບດັ່ງກ່າວກ່ອນຈົນກ່ວາຈະມີການປັບປຸງການຈັດຕັ້ງ ແລະ ປ່ຽນແປງ.

1.3 ສໍາລັບຢູ່ອົງການຄຸ້ມຄອງທີ່ດິນ ປະຈໍາເມືອງ, ເທດສະບານ ແມ່ນໃຫ້ຕັ້ງເປັນຈຸງານຄຸ້ມຄອງລາຍຮັບຈາກທີ່ດິນໂດຍໃຫ້ຂຶ້ນກັບໜ່ວຍບໍລິຫານ, ສັງລວມ ແລະ ຈັດຕັ້ງພະນັກງານ ຊຶ່ງປະກອບດ້ວຍພະນັກງານໃນນັ້ນເມືອງນ້ອຍມີ ສີ່ ທ່ານ, ເມືອງລະດັບກາງມີ ຫ້າ ທ່ານ ແລະ ເມືອງໃຫຍ່ມີ ຫົກ ທ່ານ ປະກອບມີຫົວໜ້າຈຸງານ ໜຶ່ງ ທ່ານ, ຮອງ ໜຶ່ງ ທ່ານ ແລະ ວິຊາການຈໍານວນໜຶ່ງ ທີ່ມີຄວາມຮູ້ວິຊາສະເພາະກ່ຽວກັບການເງິນ, ການບັນຊີ ແລະ ຄອມພິວເຕີລະດັບຊັ້ນສູງຂຶ້ນເມືອ ຕາມການແຕ່ງຕັ້ງຂອງເຈົ້າເມືອງ ໂດຍການສະເໜີຂອງຫົວໜ້າອົງການຄຸ້ມຄອງທີ່ດິນປະຈໍາເມືອງ, ເທດສະບານ ເພື່ອຮັບຜິດຊອບໃນການຕິດຕາມກວດກາ ແລະ ເກັບຄ່າທໍານຽມນໍາໃຊ້ທີ່ດິນ, ຄ່າເຊົ່າ, ຄ່າສໍາປະທານ, ຄ່າຂາຍສິດນໍາໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການຫັນປ່ຽນປະເພດທີ່ດິນ, ຄ່າບໍລິການວິຊາການ ແລະ ລາຍຮັບອື່ນໆກ່ຽວກັບທີ່ດິນເຊັ່ນ: ຄ່າສໍາຫຼວດວັດແທກ, ແຕ້ມແຜນທີ່, ຄ່າຂາຍແບບຟອມ ຕາມຂອບເຂດສິດອໍານາດຂອງຕົນ ແລະ ຕາມການມອບໝາຍ ຂອງອົງການຄຸ້ມຄອງທີ່ດິນປະຈໍາແຂວງ, ນະຄອນຫຼວງວຽງຈັນ.

1.4 ສໍາລັບຢູ່ໜ່ວຍງານທີ່ດິນປະຈໍາບ້ານ ແມ່ນມອບໃຫ້ຮັບຜິດຊອບໃນການເກັບຄ່າທໍານຽມນໍາໃຊ້ທີ່ດິນໂດຍກົງພາຍໃນບ້ານບ່ອນດິນຕັ້ງຢູ່ ຕາມລະບຽບການ ແລະ ຕາມການມອບໝາຍຂອງອົງການຄຸ້ມຄອງທີ່ດິນ ປະຈໍາເມືອງ, ເທດສະບານ.

## 2. ລະບຽບຫຼັກການເກັບລາຍຮັບຈາກທີ່ດິນ.

ການເກັບລາຍຮັບຈາກທີ່ດິນໃຫ້ປະຕິບັດດັ່ງນີ້ :

- ລາຍໄດ້ຈາກການເກັບຄ່າທໍານຽມ, ຄ່າທໍານຽມ, ຄ່າຈົດທະບຽນ, ຄ່າເຊົ່າ, ຄ່າສໍາປະທານທີ່ດິນ, ຄ່າຂາຍສິດນໍາໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການຫັນປ່ຽນປະເພດທີ່ດິນ ແມ່ນໃຫ້ຖອກເຂົ້າງົບປະມານແຫ່ງລັດ ຄັງເງິນແຫ່ງຊາດ ຫຼື ຄັງເງິນແຫ່ງຊາດປະຈໍາແຂວງ, ນະຄອນຫຼວງວຽງຈັນ ຫຼື ຄັງເງິນແຫ່ງຊາດປະຈໍາເມືອງ ໃນນັ້ນຕ້ອງໄດ້ມີການຈົດຮັບ ແລະ ຈົດມອບຕາມສາລະບານງົບປະມານທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການຂອງກະຊວງການເງິນວາງອອກຢ່າງເຂັ້ມງວດ.

- ລາຍຮັບບໍລິຫານວິຊາການກ່ຽວກັບທີ່ດິນເຊັ່ນ : ຄ່າບໍລິການວັດແທກທີ່ດິນກະສິກໍາ, ທີ່ດິນປຸກສ້າງ ແລະ ຄ່າບໍລິການອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ ແມ່ນໃຫ້ນໍາໃຊ້ເຂົ້າໃນຮ່ວງລາຍຈ່າຍຮັບໃຊ້ວິຊາການຂອງຮ່ວງລາຍຮັບໃຊ້ວຽກງານບໍລິຫານປົກກະຕິ ແຕ່ຕ້ອງມີການຈົດຮັບ - ຈົດຈ່າຍຕາມແຜນການງົບປະມານທັງໝົດ ໂດຍໃຫ້ຈົດກ່າຍຕາມລະບົບການບັນຊີແຫ່ງລັດ ແລະ ສາລະບານງົບປະມານແຫ່ງລັດ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9, 19 ແລະ 61

ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 381/ນຍ, ລົງວັນທີ 23 ທັນວາ 2005 ວ່າດ້ວຍລາຍຮັບວິຊາການ.

- ໃຫ້ປະຕິບັດລະບຽບການບັນຊີ ແລະ ວິໄນການເງິນຢ່າງເຂັ້ມງວດ ເຊັ່ນ : ປະຕິບັດຕາມກົດໝາຍງົບປະມານ, ກົດໝາຍບັນຊີ ແລະ ກົດໝາຍອື່ນໆທີ່ພົວພັນ, ຕາມແບບຟອມການລົງບັນຊີ, ການສະຫຼຸບ ແລະ ການລາຍງານໃຫ້ຂັ້ນເທິງ ໂດຍໃຫ້ປະຕິບັດການລົງບັນຊີປະຈຳວັນ, ບັນຊີແຍກປະເພດລາຍຮັບຈາກທີ່ດິນ.

- ໃຫ້ບັນດາຫ້ອງການວິຊາການເຊັ່ນ : ຫ້ອງການຂໍ້ມູນຂ່າວສານ ແລະ ແຕ້ມແຜນທີ່, ຫ້ອງການວາງແຜນ ແລະ ພັດທະນາທີ່ດິນ, ຫ້ອງການທີ່ດິນ ແລະ ຫ້ອງການກວດກາ ແລະ ແກ້ໄຂຂໍ້ຂັດແຍ່ງພາຍໃນອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນ, ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ ເທດສະບານ ເປັນຜູ້ປະຕິບັດວຽກງານວິຊາສະເພາະຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ພ້ອມທັງເຮັດໃບຄິດໄລ່ ແລ້ວສົ່ງໃຫ້ໜ່ວຍງານຄຸ້ມຄອງລາຍຮັບຈາກທີ່ດິນ ເພື່ອອອກໃບສັ່ງມອບເຂົ້າຄັງເງິນແຫ່ງຊາດ ຕາມລະບຽບການ ໂດຍໃຫ້ແຍກລາຍຮັບຈາກທີ່ດິນແຕ່ລະປະເພດຢ່າງລະອຽດ ແລະ ຈະແຈ້ງ

## 3. ການປະຕິບັດເກັບລາຍຮັບຈາກທີ່ດິນ.

3.1 ໃຫ້ທົວໜ້າອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຊີ້ນຳໂດຍກົງໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ, ຕິດຕາມກວດກາ ແລະ ການສັ່ງມອບ - ສັ່ງຈ່າຍກ່ຽວກັບຈຳນວນເງິນດັ່ງກ່າວ ໂດຍໃຫ້ປະຕິບັດຕາມ ລະບຽບບັນຊີສະເພາະຢ່າງເຂັ້ມງວດເຊັ່ນ : ໃຫ້ມີເອກະສານສັ່ງມອບ - ສັ່ງຈ່າຍ ແລະ ນຳເງິນເຂົ້າບັນຊີທີ່ເປີດໄວ້ຢູ່ຄັງເງິນແຫ່ງຊາດ ຂອງອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນ.

3.2 ໃຫ້ທົວໜ້າອົງການຄຸ້ມຄອງທີ່ດິນ ປະຈຳເມືອງ ຮັບຜິດຊອບໃນການຈັດຕັ້ງເກັບລາຍຮັບຈາກທີ່ດິນມີໜ້າທີ່ຕົ້ນຕໍດັ່ງນີ້ :

- ສ້າງແຜນເກັບລາຍຮັບ, ເກັບກຳຂໍ້ມູນສະຖິຕິທົວໜ່ວຍໃຫ້ຄົບຖ້ວນ, ຄິດໄລ່ໃຫ້ມີຄວາມຊັດເຈນ ແລະ ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ເປີດເຜີຍ.
- ເຜີຍແຜ່, ແນະນຳກ່ຽວກັບການເກັບລາຍຮັບຈາກທີ່ດິນໃຫ້ບັນດາເປົ້າໝາຍ ທີ່ມີໜ້າທີ່ມອບພັນທະເຂົ້າງົບປະມານ, ເພີ່ມທະວີການຝຶກອົບຮົມທາງດ້ານວິຊາສະເພາະ ເພື່ອຍົກລະດັບຄຸນນະພາບຂອງວຽກງານ ແລະ ຫຼຸດຜ່ອນຂັ້ນຕອນໃນການບໍລິການທີ່ມີຫຼາຍຂອດ ;
- ຈັດຕັ້ງ, ຄຸ້ມຄອງການເກັບລາຍຮັບຈາກການເກັບຄ່າທຳນຽມນຳໃຊ້ທີ່ດິນ, ອາກອນທີ່ດິນ, ຄ່າທຳນຽມ,ຄ່າຈົດທະບຽນ, ຄ່າເຊົ່າ, ຄ່າສຳປະທານທີ່ດິນ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການຫັນປ່ຽນປະເພດທີ່ດິນ, ຄ່າບໍລິການ ແລະ ອື່ນໆໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະ ໂປ່ງໃສ ແລ້ວລາຍງານໃຫ້ ອົງການ

ຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຫຼວງວຽງຈັນ ເພື່ອສັງລວມລາຍງານໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ.

## 4. ການມອບລາຍຮັບຈາກທີ່ດິນ.

ການມອບລາຍຮັບຈາກທີ່ດິນປະເພດຄ່າທຳນຽມນຳໃຊ້ທີ່ດິນ, ຄ່າທຳນຽມ, ຄ່າຈົດທະບຽນ, ຄ່າເຊົ່າ, ຄ່າສຳປະທານທີ່ດິນ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການຫັນປ່ຽນປະພດທີ່ດິນ ແມ່ນໃຫ້ຖອກເຂົ້າງົບປະມານແຫ່ງລັດ ໂດຍຖອກເຂົ້າຄັງເງິນແຫ່ງຊາດ ຫຼື ຄັງເງິນແຫ່ງຊາດ ປະຈຳແຂວງ, ນະຄອນຫຼວງວຽງຈັນ ຫຼື ຄັງເງິນແຫ່ງຊາດປະຈຳເມືອງ ຊຶ່ງແມ່ນຫົວໜ້າອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຫຼວງວຽງຈັນ ແລະ ຫົວໜ້າອົງການຄຸ້ມຄອງທີ່ດິນ ປະຈຳເມືອງ ເປັນຜູ້ສັ່ງມອບຕາມລະບຽບການເງິນ ໂດຍໃຫ້ມອບເຂົ້າບັນຊີຄັງເງິນແຫ່ງຊາດ ທີ່ອົງການຄຸ້ມຄອງທີ່ດິນແຕ່ລະຂັ້ນໄດ້ເປີດບັນຊີໄວ້.

ການມອບລາຍຮັບຈາກທີ່ດິນທີ່ເປັນລາຍຮັບວິຊາການ ແມ່ນໃຫ້ປະຕິບັດຕາມມາດຕາ 4, 9 ແລະ ມາດຕາ 10 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 381/ນຍ, ລົງວັນທີ 23 ທັນວາ 2005 ວ່າດ້ວຍລາຍຮັບວິຊາການ ຊຶ່ງການນຳໃຊ້ເງິນລາຍຮັບວິຊາການແມ່ນໃຫ້ນຳໃຊ້ເຂົ້າໃນຮ່ວງລາຍຈ່າຍງົບປະມານປະຈຳປີ ເຊັ່ນ :

1. ຈ່າຍເງິນເດືອນ ;
2. ຈ່າຍເງິນນະໂຍບາຍຂອງພະນັກງານ - ລັດຖະກອນ ;
3. ຈ່າຍເຂົ້າໃນວຽກງານບໍລິຫານປົກກະຕິ ;
4. ຈ່າຍເຂົ້າໃນວຽກງານຂະຫຍາຍກິດຈະການ ;

ການຮັບ ແລະ ການຈ່າຍຕ້ອງສ້າງເອກະສານຈົດຮັບ - ຈົດຈ່າຍໃນທຸກເທື່ອທີ່ມີການຮັບ ຫຼື ມີການຈ່າຍຕາມລະບຽບການເງິນ ແລະ ບໍ່ອະນຸຍາດໃຫ້ເອົາເງິນທີ່ເກັບໄດ້ນັ້ນໄວ້ໃນຄັງແຮ ເພື່ອນຳໃຊ້ໄປທາງອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

ໃນການຈ່າຍລາຍຮັບວິຊາການຈະຕ້ອງປະຕິບັດຕາມເງື່ອນໄຂດັ່ງຕໍ່ລົງໄປນີ້ :

1. ຕ້ອງໄດ້ຜ່ານການປະສານ ແລະ ເຫັນດີຈາກຂະແໜງການເງິນເພື່ອໃຫ້ຮູ້ໄດ້ແຜນລາຍຈ່າຍປະຈຳປີຂອງອົງການຄຸ້ມຄອງທີ່ດິນ ໃນຮ່ວງລາຍຈ່າຍທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ແລະ ເພື່ອງົບປະມານຈະສາມາດຕັດຮ່ວງລາຍຈ່າຍຕາມຕົວເລກດັ່ງກ່າວ ຕາມຕົວເລກອະນຸມັດຂອງສະພາແຫ່ງຊາດ;
2. ລາຍຮັບວິຊາການຕ້ອງຈົດຮັບ - ຈົດຈ່າຍບົນພື້ນຖານດັ່ງນີ້ :

- ມີແຜນລາຍຮັບ - ລາຍຈ່າຍນອນໃນປີ, ບໍ່ອະນຸຍາດໃຫ້ຈົດຮັບ - ຈົດຈ່າຍນອກແຜນງົບປະມານ ;
- ຕ້ອງປະຕິບັດຕາມລະບຽບ ແລະ ຂັ້ນຕອນການຈົດຮັບ - ຈົດຈ່າຍຂອງງົບປະມານ, ຈ່າຍໄດ້

ສະເພາະແຕ່ຮ່ວງລາຍຈ່າຍ ຕາມເປົ້າໝາຍເທິງນີ້ເທົ່ານັ້ນ,

- ກໍລະນີທາກລາຍຮັບວິຊາການມີສ່ວນຜິດດ່ຽງເຫຼືອຈາກການໃຊ້ຈ່າຍຂ້າງເທິງນີ້ແມ່ນໃຫ້ມອບເຂົ້າງົບປະມານທັງໝົດ;
- ກໍລະນີທາກລາຍຮັບວິຊາການມີສ່ວນຜິດດ່ຽງໜ້ອຍກ່ວາງົບປະມານທີ່ໄດ້ອະນຸມັດ ງົບປະມານສະໜອງໃຫ້ບົນພື້ນຖານທີ່ມີການກວດກາລາຍຮັບວິຊາການຕົວຈິງ.

## 5. ການສະຫຼຸບ ແລະ ລາຍງານ.

ພາຍຫຼັງມີການສະຫຼຸບບັນຊີໃນແຕ່ລະເດືອນແລ້ວ ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ ຕ້ອງລາຍງານໃຫ້ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນ ແລະ ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນຫຼວງວຽງຈັນ ຕ້ອງສະຫຼຸບສັງລວມລາຍງານໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ( ຫ້ອງການ ) ບໍ່ໃຫ້ກາຍວັນທີ 10 ຂອງເດືອນຢ່າງເປັນປົກກະຕິ, ພ້ອມກັນນັ້ນກໍ່ຕ້ອງລາຍງານໃຫ້ຫ້ອງການການເງິນເມືອງ, ພະແນກການເງິນແຂວງ, ນະຄອນຫລວງວຽງຈັນ ແລະ ເຈົ້າເມືອງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ເຊັ່ນດຽວກັນ. ຈາກນັ້ນອົງການຄຸ້ມຄອງທີ່ດິນແຫ່ງຊາດຕ້ອງລາຍງານໃຫ້ກະຊວງການເງິນເພື່ອຕິດຕາມ ແລະ ກວດກາຕາມລະບຽບການເງິນ.

## 6. ການປະຕິບັດນະໂຍບາຍຕໍ່ຜູ້ທີ່ເກັບລາຍຮັບຈາກທີ່ດິນ :

ຄ່າບຳເນັດໃຫ້ແກ່ສູນກາງ ແລະ ອົງການຄຸ້ມຄອງທີ່ດິນປະຈຳທ້ອງຖິ່ນ ທີ່ຮັບຜິດຊອບເກັບລາຍຮັບຈາກຄ່າເຊົ່າ, ຄ່າສຳປະທານ, ຄ່າປັບໃໝ, ຄ່າທຳນຽມ, ຄ່າຈົດທະບຽນ ແລະ ລາຍຮັບວິຊາການທີ່ມອບໃຫ້ 2,5% ຂອງລາຍຮັບທີ່ເກັບໄດ້ຍົກເວັ້ນຕົ້ນທຶນ ແລະ ດອກເບ້ຍ, ຖ້າຫາກເກັບໄດ້ລື່ນແຜນການທີ່ແບ່ງໃຫ້ນັ້ນແມ່ນມອບໃຫ້ເມືອງ 10%, ແຂວງ 15% ແລະ ສູນກາງ 75% ຂອງຈຳນວນລາຍຮັບທີ່ເກັບໄດ້ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງຄຳແນະນຳລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1927/ກງ, ລົງວັນທີ 17 ສິງຫາ 2007 ນັ້ນແມ່ນໃຫ້ຍົກເລີກການປະຕິບັດຕາມແຈ້ງການຂອງກະຊວງການເງິນ ສະບັບເລກທີ 2100/ກງ, ລົງວັນທີ 03 ກັນຍາ 2009

ສ່ວນຄ່າບຳເນັດຈາກຄ່າທຳນຽມນຳໃຊ້ທີ່ດິນໃຫ້ບ້ານ, ຄະນະຊີ້ນຳ ແລະ ພະນັກງານຂອງໜ່ວຍງານທີ່ດິນປະຈຳບ້ານ ແມ່ນໃຫ້ສືບຕໍ່ປະຕິບັດໂດຍຫັກຕາມອັດຕາສ່ວນດັ່ງນີ້ :

| ລຳດັບ | ປະເພດຄ່າທຳນຽມນຳໃຊ້ທີ່ດິນ ທີ່ບ້ານຈັດຕັ້ງປະຕິບັດ | ເປີເຊັນທີ່ອະນຸມັດໃຫ້ຫັກຂອງຈຳນວນເງິນທີ່ເກັບໄດ້ທັງໝົດ |
|---|---|---|
| 01 | ບ້ານຕ່າງໆທີ່ຢູ່ໃນເຂດເທດສະບານຂອງແຂວງ/ນະຄອນຫຼວງ | 4% |
| 02 | ບ້ານຕ່າງໆ ທີ່ຢູ່ໃນເຂດເທດສະບານ ຂອງເມືອງ ຫຼື ຕົວເມືອງທີ່ຂຶ້ນກັບການປົກຄອງເມືອງ | 6% |
| 03 | ບ້ານຕ່າງໆ ທີ່ຢູ່ໃນເຂດທົ່ງພຽງ ແລະ ເຂດພູພຽງ | 10% |

| | | |
|---|---|---|
| 04 | ບ້ານຕ່າງໆ ທີ່ຢູ່ໃນເຂດພູດອຍ | 15% |

ສຳລັບການແບ່ງປັນພາຍຫຼັງໄດ້ຫັກຄ່າບຳເນັດໃຫ້ບ້ານດັ່ງກ່າວ ຕ້ອງແບ່ງປັນຄືດັ່ງນີ້ :

- ໃຫ້ບຳເນັດ ໜ່ວຍງານທີ່ດິນ ປະຈຳບ້ານ ແລະ ພະນັກງານເກັບຄ່າທຳນຽມນຳໃຊ້ທີ່ດິນ 60% ຂອງຈຳນວນເງິນບຳເນັດ ທີ່ໄດ້ຮັບທັງໝົດ;
- ໃຫ້ເອົາເຂົ້າຄັງລວມຂອງບ້ານ 40% ຂອງຈຳນວນເງິນບຳເນັດ ຈາກຄ່າທຳນຽມນຳໃຊ້ທີ່ດິນທີ່ໄດ້ຮັບທັງໝົດເພື່ອໃຊ້ສອຍໃນຜົນປະໂຫຍດລວມຂອງບ້ານ ເຊັ່ນ: ການບົວລະບັດຮັກສາ ແລະ ສ້າງຖະໜົນຫົນທາງ, ສຸກສາລາປະຈຳບ້ານ, ຍົກລະດັບການສຶກສາ, ປ້ອງກັນຄວາມສະຫງົບ ແລະ ໃຊ້ຈ່າຍອື່ນໆເພື່ອຜົນປະໂຫຍດລວມຂອງປະຊາຊົນພາຍໃນບ້ານ.

## 7. ການຈັດຕັ້ງປະຕິບັດ.

ມອບໃຫ້ຫ້ອງການ, ບັນດາກົມ, ສູນ, ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນຫຼວງວຽງຈັນ, ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ ແລະ ໜ່ວຍງານທີ່ດິນປະຈຳບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ຄຳແນະນຳສະບັບນີ້ປ່ຽນແທນຄຳແນະນຳສະບັບເລກທີ 3158/ສນຍ.ອຄດຊ, ລົງວັນທີ 03 ທັນວາ 2008.

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ກຳນົດບົດບັນຍັດໃດທີ່ຂັດກັບຄຳແນະນຳສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ຫົວໜ້າອົງການຄຸ້ມຄອງຄອງທີ່ດິນແຫ່ງຊາດ

ສຳນັກງານນາຍົກລັດຖະມົນຕີ
ອົງການຄຸ້ມຄອງທີ່ດິນແຫ່ງຊາດ

**ດຳອ້ວນ ບຸບຜາ**